**<u>ແຜນການສອນ</u>**

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 04 ກໍຣະກະດາ 2010 (07-04-2010)

---

# <u>ພລັງຂອງການຕັດສິນໃຈ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** (1 ຊາມູເອນ 13:8-14; 16-6-13)

### <u>ເປົ້າໝາຍຂອງບົດຮຽນ:</u>

ບົດຮຽນນີ້ ແມ່ນກ່ຽວກັບການເລືອກເອົາຊາຍຄົນນຶ່ງ ຕາມພຣະປະສົງຂອງພຣະອົງ ເພື່ອຈະໃຫ້ເປັນກະສັດອົງໃໝ່ ແທນກະສັດຊາອູນ ແລະຄຳສັ່ງສອນຂອງພຣະເຈົ້າ ທີ່ຈະສຳຣວດກວດເບິ່ງຈິດໃຈພາຍໃນ ຫລາຍກວ່າປາກົດການທີ່ປາກົດຂຶ້ນພາຍນອກ.

### <u>ຄວາມສຳຄັນຂອງບົດຮຽນ:</u>

ຜູ້ໃຫຍ່ທີ່ເຖິງກະສຽນແລ້ວ (ອາຍຸເລີຍ 20 ປີ) ເຂົາເຈົ້ານັກຈະຄິດວ່າ ພວກເຂົາເຈົ້າເປັນຄົນທີ່ໃຊ້ການໄດ້ ຕໍ່ສາຍພຣະເນດຂອງພຣະເຈົ້າ ເຂົາເຈົ້າຈະເຮັດທຸກສິ່ງໃຫ້ເປັນທີ່ພໍພຣະທັຍພຣະເຈົ້າດ້ວຍ (ການປາກົດການພາຍນອກ) ແທນທີ່ຈະເປັນການກະທຳທີ່ເກີດຈາກຈິດໃຈ (ທີ່ເປັນລັກສະນະພາຍໃນ) ມາຕະຖານຂອງພຣະເຈົ້າແມ່ນ ພື້ນຖານສ່ວນໃນສຸດຂອງຈິດໃຈ.

### <u>ຜົນສະທ້ອນຕໍ່ຊີວິດ:</u>

ບົດຮຽນນີ້ຈະຊ່ອຍໃຫ້ທ່ານນຶກຂຶ້ນໄດ້ວ່າ ພຣະເຈົ້າ ໄດ້ເລືອກທ່ານເພື່ອການຮັບໃຊ້ ເພາະເນື່ອງດ້ວຍເຫດຜົນອັນນີ້ ພຣະອົງຈຶ່ງຊົງສະຖິດຢູ່ໃນທ່ານ.

### <u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

### <u>ແນະນຳ:</u>

- ພຣະຄັມພີເປັນແຫລ່ງກຳເນີດກ່ຽວກັບພລັງ, ສິ່ງເຫລົ່ານີ້ສະແດງເຖິງຫຍັງ? ໃນບົດຮຽນມື້ນີ້ນຳພາພວກເຮົາສົນທະນາວ່າພວກເຮົາຈະໃຊ້ພລັງອຳນາດຂອງພຣະເຈົ້າໃນການທ້າທາຍກັບສິ່ງທີ່ພວກເຮົາໄດ້ປະເຊີນໜ້າຢູ່ໃນປະຈຸບັນ ແລະທຸກໆ ບັນຫາທີ່ພວກເຮົາພົບ ພວກເຮົາຈະສາມາດເຊື່ອໄວ້ວາງໃຈໃນພຣະອົງຫລາຍປານໃດ.

1. **ການເລືອກຂອງຂ້ອຍ:** (1 ຊາມູເອນ 13:8-14)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ຊາມູເອນ 13:8-14
- ຈົ່ງສຶກສາສົນທະນາກັນໃນຄຳຖາມຕໍ່ໄປນີ້: ເປັນຫຍັງຊາອູນຈຶ່ງຟ້າວຝັ່ງກະວົນກະວາຍແທ້?
- ສິ່ງທີ່ຊາອູນໄດ້ກະທຳລົງໄປນັ້ນ ມັນເປັນການລ່ວງເກີນເວລາຂອງພຣະເຈົ້າທີ່ຕັ້ງໄວ້ແນວໃດ?
- ໃນຈຸດໃດທີ່ຄຣິສຕຽນພວກເຮົາໄດ້ພາກັນພຍາຍາມເດີນໄປກ່ອນ, ທຳກ່ອນ, ລ່ວງເກີນພຣະເຈົ້າ?
- ຂໍໃຫ້ແບ່ງປັນປະສົບການໃນຊີວິດຂອງທ່ານ ໃນເວລາທ່ານບໍ່ໄດ້ລໍຖ້າເວລາຂອງພຣະເຈົ້າ ຫລືເພິ່ງແຕ່ຄວາມຮູ້ ຄວາມສລາດຂອງຕົນ (ເຊັ່ນ ການເລືອກໂຮງຮຽນວິທະຍາລັຍ, ການຊື້ເຮືອນ, ແລະອື່ນໆ. ແລະຜົນທີ່ຕາມມາ ເພາະທ່ານໄດ້ເຊື່ອໃນຄວາມຮອບຮູ້ຂອງຕົນເອງໃນການເລືອກທີ່ປາສຈາກການເພິ່ງພາພຣະເຈົ້ານັ້ນເປັນແນວໃດ?
- ຂໍນັກຮຽນບອກເຖິງການຕັດສິນໃຈ ທີ່ໄດ້ສະແດງໃຫ້ເຫັນເຖິງການຂາດການອຸທິດຕົນເຖິງແຜນການຂອງພຣະເຈົ້າ ໃນເມື່ອລາວບໍ່ໄດ້ລໍຖ້າຈົນເຖິງຊາມູເອນມາຮອດວ່າເປັນແນວໃດ.
- ເປັນດ້ວຍເຫດໃດ ບາງເທື່ອພຣະເຈົ້າຈຶ່ງໃຫ້ພວກເຮົາລໍຖ້າໂອກາດ ແລະເວລາອັນເໝາະສົມອັນດີທີ່ສຸດຂອງພຣະອົງ? ໃນເມື່ອພວກເຮົາຫາກທຳຕາມ ຄວາມເຊື່ອຂອງພວກເຮົາຈະປ່ຽນແປງໄປແນວໃດ?
- ພວກເຮົາບໍ່ສາມາດຮູ້ພຣະປະສົງຂອງພຣະອົງທີ່ມີສຳລັບຊີວິດຂອງພວກເຮົາ ຖ້າພວກເຮົາເລືອກໃນທາງທີ່ບໍ່ເຊື່ອຟັງ, ການທີ່ໄດ້ຍິນສຽງຂອງພຣະອົງ ແລະການທີ່ຈະຮູ້ຈັກແຜນການຂອງພຣະອົງແລ້ວຈະເປັນຢ່າງໃດ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** (1 ຊາມູເອນ 13:8-14)

1. ມັນຈະເປັນໄປໄດ້ບໍ່ທີ່ຈະຕ້ອງເລືອກ ແລະສແວງຫານ້ຳພຣະທັຍຂອງພຣະເຈົ້າທຸກໆຢ່າງ?
2. ໃນການທຳຕາມແຜນການຂອງພຣະເຈົ້ານັ້ນ ມີບ່ອນໃດ, ອັນໃດທີ່ເປັນການຍາກສຳລັບທ່ານ ແລະແລະມີຫຍັງທີ່ບໍ່ໄດ້ດັ່ງໃຈຂອງທ່ານ? ອັນໃດ ບ່ອນໃດທີ່ງ່າຍທີ່ທຳຕາມແຜນການຂອງພຣະເຈົ້າສຳລັບທ່ານ?
3. ມີອັນໃດແດ່ທີ່ມີຜົນສະທ້ອນຕໍ່ການອະທິຖານປະຈຳວັນຂອງທ່ານ, ໃນການສຶກສາພຣະຄັມພີເດ, ແລະການນະມັສການເດເປັນໄປຕາມການທີ່ທ່ານໄດ້ເລືອກການທຳຕາມແຜນການຂອງພຣະເຈົ້າບໍ່?

2. **ການເລືອກຂອງເຂົາ:** (1 ຊາມູເອນ 16-6-10)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ຊາມູເອນ 16:6-10
- ໃນເມື່ອຊາມມູເອນໄດ້ເຫັນ ເອລີອາບ ແລ້ວລາວເຊື່ອວ່າແມ່ນຊາຍຜູ້ທີ່ພຣະເຈົ້າເລືອກລາວໄວ້ໃຫ້ເປັນຜູ້ນຳຂອງຊົນຊາດອິສຣາເອນ ທ່ານເຄີຍໄດ້ຄິດເໝືອນລາວບໍ່? ແມ່ນຫຍັງທີ່ອຸປນິສັຍຂອງວັທນະທັມຂອງພວກເຮົາໃນການເລືອກຜູ້ນຳ?
- ລອງທ່ານວາດພາບເບິ່ງລັກສະນະຮູບຮ່າງຂອງເອລີອາບເບິ່ງວ່າເປັນແນວໃດ?
- ເປັນຫຍັງເຈດຊີຈຶ່ງບໍ່ສເນີຊື່ຂອງດາວິດອອກມາຢູ່ໃນຈຳນວນລູກຊາຍທັງໝົດຂອງລາວ?
- ໃນຂໍ້ທີ 7 ໄດ້ໃຫ້ຄວາມກະຈ່າງແຈ້ງແກ່ພວກເຮົາໃນເວລາການເລືອກຂອງຄົນອື່ນທີ່ເຮັດໃຫ້ພວກເຮົາເຈັບປວດນັ້ນຄືແນວໃດ?

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** (1 ຊາມູເອນ 16:6-10)

1. ເຮັດແນວໃດພວກເຮົາຈຶ່ງສາມາດ, ເໝືອນພຣະເຈົ້າ, ເບິ່ງພາຍໃນຂອງຄົນອື່ນ ແທນທີ່ຈະ ຈົດຈໍ່ຢູ່ແຕ່ສິ່ງທີ່ເກີດຂຶ້ນພາຍນອກ ແລະຄວາມສາມາດ?
2. ການຕັດສິນໃຈຂອງ ເພື່ອນ, ຄອບຄົວໄດ້ມີຜົນກັບມາສູ່ ລູກໆ ແນວໃດ? ຕໍ່ຄົນໜຸ່ມເດ? ແລະຕໍ່ຜູ້ໃຫຍ່ເດເປັນແນວໃດ?
3. ພວກເຮົາຈະສາມາດເບິ່ງພາຍໃນຂອງຄົນອື່ນ ແທນທີ່ຈະເບິ່ງພາຍນອກຫລາຍກວ່າໄດ້ແນວໃດ?
4. ພວກເຮົາຈະບອກຜົນສະທ້ອນຂອງການເລືອກຜິດໃຫ້ກັບຄົນອື່ນໃຫ້ເຂົ້າໃຈໄດ້ຢ່າງໃດ?

3 . **ການເລືອກຂອງພຣະເຈົ້າ :** (1 ຊາມູເອນ 16:11-13 )

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ກິຈການ 1 ຊາມູເອນ 16:11-13
- ຂໍໃຫ້ຜູ້ນຶ່ງອ່ານພຣະທັມເພງສັຣເສີນ ບົດທີ 23 ແລ້ວນໍາພານັກຮຽນນົນທະນາເຖິງ ປະສົບການຂອງຜູ້ລ້ຽງແກະຢ່າງດາວິດ ຈະມາເປັນຜູ້ນໍາຊົນຊາດອິສຣາເອນໄດ້ແນວໃດ? ໃນຄວາມຄິດຂອງທ່ານ ທ່ານຄິດວ່າດາວິດມີລັກສະນະຮູບຮ່າງຢ່າງໃດ?

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** 1 ຊາມູເອນ 16:11-13

1. ມີເຫດຜົນອັນໃດບໍ່ທີ່ເຮັດໃຫ້ທ່ານບໍ່ຮັບໃຊ້ພຣະເຈົ້າຢູ່ໃນໂບດນີ້? (ຄໍາຕອບບາງເທື່ອຜູ້ນັ້ນອາດຈະເວົ້າວ່າ: ຂ້ອຍເຖົ້າຫລາຍແລ້ວ, ຂ້ອຍມີທຸຣະຫລາຍໂພດ ແລະອື່ນໆ...) ແລ້ວພຣະເຈົ້າຈະຕອບຕໍ່ເຫດຜົນເຫລົ່ານັ້ນວ່າແນວໃດ?
2. ແມ່ນຫຍັງທີ່ພວກເຮົາໃນຫ້ອງຮຽນນີ້ ຄວນໜູນຈິດໃຈສະມາຊິກຄົນອື່ນໆ ໃຫ້ອຸທິດຕົນໃຫ້ຮັບໃຊ້ພຣະເຈົ້າໄດ້ໃນເມື່ອພຣະເຈົ້າຮຽກເອີ້ນເຂົາເຈົ້າໃຫ້ຮັບໃຊ້?
3. ອັນໃດທີ່ພວກເຮົາຄວນຈະເຊື່ອໄວ້ວາງໃຈໃນການນະມັສການພຣະເຈົ້າໂດຍສ່ວນຕົວຂອງພວກເຮົາໃຫ້ຍອມທໍາຕາມພຣະເຈົ້າຊົງຮຽກເອີ້ນຢ່າງສຸດຈິດສຸດໃຈໄດ້?

**ພຣະຄັມພີແຫ່ງຄວາມຈິງ**

- ພວກເຮົາປ່ອຍປະລະເລີຍໂອກາດການຮັບໃຊ້ພຣະເຈົ້າຢ່າງບໍ່ມີຄວາມໝາຍ ໂດຍທາງທີ່ບໍ່ຍອມຮັບພຣະຄໍາຂອງພຣະອົງ.
- ຈົ່ງລໍຖ້າເວລາຂອງພຣະເຈົ້າທີ່ຈະນໍາມາເຖິງພວກເຮົາເພື່ອແນະນໍາພວກເຮົາ, ການປົກປ້ອງຄຸ້ມຄອງ, ແລະແລະຕອບສນອງພວກເຮົາ.
- ພຣະເຈົ້າຊົງເປັນຜູ້ຈັດຕຽມວິທີການ,ສິ່ງທີ່ດີສໍາລັບການຊ່ອຍເຫລືອ ປະກາດດີກວ່າພວກເຮົາທໍາເອງ. ເພາະວ່າພວກເຮົາບໍ່ເຫັນພາຍໃນຫົວໃຈຂອງຄົນອື່ນໆ, ໃນເມື່ອພວກເຮົາຫາກຊອກສແວງຫາການຊົງນໍາຂອງພຣະເຈົ້າກ່ອນ ພວກເຮົາຈະທໍາທຸກສິ່ງໃນການຮັບໃຊ້ພຣະອົງຢ່າງສະດວກສະບາຍ.
- ຜູ້ໃດກໍຕາມທີ່ພຣະເຈົ້າຊົງເອີ້ນ, ພຣະອົງຈະໃຫ້ພຣະວິນຍານຂອງພຣະອົງສະຖິດຢູ່ນໍາ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH